ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 26 ກຸມພາ ຫາ 01 ມີນາ 2024



ຊາວສວນປູກກະລ່ຳປີ ບ້ານຜາຮອມ ເມືອງ ວັງວຽງ ແຂວງ ວຽງຈັນ ພົບບັນຫາຜັກກະລ່ຳ ຂາຍບໍ່ໄດ້ ແລະ ລາຄາຖືກ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ຊາວສວນປູກກະລໍ່າປີບ້ານຜາຮອມ ເມືອງວັງວຽງ ພົບບັນຫາຜັກກະລໍ່າບໍ່ໄດ້ ແລະ ລາຄາຖືກຫຼາຍ

ໂດຍ: ເຄືອຄ່າຍຊາວກະສິກອນລາວ
ຂໍ້ມູນສໍາພາດຈາກ: ທ່ານ ຄໍາໃບ ຫົວໜ້າກຸ່ມປູກຜັກ ບ້ານ ຜາຮອມ, ແຂວງວຽງຈັນ

ຊາວສວນຜູ້ປູກຜັກກະລໍ່າປີຢູ່ບ້ານຜາຮອມ ແຂວງວຽງຈັນ ກໍາລັງປະສົບກັບບັນຫາກະລໍ່າຂາຍບໍ່ອອກ ແລະ ລາຄາຖືກ. ໃນປີ 2024 ທາງກຸ່ມພົບກັບບັນຫາ ລາຄາກະລໍ່າປີຫຼຸດລົງ 30% ເມື່ອທຽບໃສ່ປີກາຍ ແລະ ຕະຫຼາດຈໍາໜ່າຍກະລໍ່າປີ ຫຼຸດລົງ 50%. ສິ່ງດັ່ງກ່າວໄດ້ສ້າງຄວາມຫຍຸ້ງຍາກດ້ານການເງິນໃຫ້ແກ່ຊາວກະສິກອນ, ຂາດລາຍໄດ້ໃນການຫາລ້ຽງຄອບຄົວ ແລະ ການເຂົ້າເຖິງໂຄງການສະຫວັດດີການ ແລະ ປະກັນສັງຄົມຕ່າງໆ ເນື່ອງຈາກບໍ່ມີຄວາມສາມາດໃນການຈ່າຍ.

ປະຈຸບັນລາຄາຜັກກະລໍ່າທີ່ຕັດຂາຍໃຫ້ແມ່ຄ້າມາຮັບຊື້ຢູ່ໜ້າສວນແມ່ນ 17,000 ກີບຕໍ່ໝື່ນ (28 ກຸມພາ 2024), ລາຄາແມ່ນຕໍ່າກວ່າທີ່ຊາວກະສິກອນໄດ້ຮັບໃນປີ 2023. ເຊິ່ງໃນປີຜ່ານມາລາຄາຜັກກະລໍ່າປະມານ 25,000-30,000 ກີບຕໍ່ໝື່ນ. ແຕ່ໃນທາງກົງກັນຂ້າມ ຕົ້ນທຶນການຜະລິດພັດຍິ່ງເພີ່ມສູງຂຶ້ນ ເນື່ອງຈາກລາຄາຂອງເມັດພັນເພີ່ມຂຶ້ນຈາກ 250,000 ກີບ ເປັນ 400,000 ກີບ ແລະ ຝຸ່ນປຸ໋ຍ ຈາກລາຄາ 550,000 ກີບ ເປັນ 800,000 ກີບ/ເປົາ.

ທ່ານ ຄໍາໃບ ຫົວໜ້າກຸ່ມປູກຜັກບ້ານຜາຮອມ ໃຫ້ຮູ້ວ່າ: "ແມ່ຄ້າໄດ້ບອກກັບທາງກຸ່ມວ່າ ໃນປະຈຸບັນຕະຫຼາດໃນນະຄອນຫຼວງວຽງຈັນ ມີຄວາມຕ້ອງການຜັກກະລໍ່າໜ້ອຍ ເຮັດໃຫ້ແມ່ຄ້າມາເກັບຊື້ຜົນຜະລິດຈາກຊາວກະສິກອນຫຼຸດລົງ." ດັ່ງນັ້ນ, "ໃນອາທິດຜ່ານມາຜັກບໍ່ໄດ້ຂາຍ ທາງກຸ່ມຕ້ອງໄດ້ຖິ້ມຜັກກະລໍ່າປີ ຈໍານວນກວ່າ 70-80 ໝື່ນ, ເນື່ອງຈາກກ້ານແຕກເສຍຫາຍຂາຍບໍ່ໄດ້." ໃນປະຈຸບັນ, ກຸ່ມຂອງພວກຕົນຍັງມີຜັກກະລໍ່າທີ່ບໍ່ທັນໄດ້ເກັບກ່ຽວອີກປະມານ 60 ໂຕນ.

ກຸ່ມປູກຜັກກະລໍ່າປີບ້ານຜາຮອມ ຜາຕັ້ງແມ່ນໄດ້ເກັບຜັກກະລໍ່າປີຂາຍໃຫ້ແມ່ຄ້າທີ່ຢູ່ໃກ້ຄຽງມາຈາກເມືອງກາສີ ເພື່ອສົ່ງໄປຂາຍຢູ່ຕະຫຼາດໃນນະຄອນຫຼວງວຽງຈັນ. ໃນປີຜ່ານມາ ແມ່ຄ້າ ໄດ້ຊື້ຜັກກະລໍ່າປີ 3-4 ຄັນລົດບັນທຸກຕໍ່ມື້. ແຕ່ຕົກມາປີ 2024 ນີ້ ມີພຽງແຕ່ ມື້ລະເຄິ່ງຄັນລົດເທົ່ານັ້ນ.



ຈາກທີ່ຜ່ານມາ, ກຸ່ມຜູ້ຜະລິດກະລ່ຳປີຜາຮອມ ແມ່ນໄດ້ພະຍາຍາມ ແກ້ໄຂບັນຫາ ການສະໜອງລົ້ນຕະຫຼາດໃນລະດູການເກັບກ່ຽວທີ່ພ້ອມກັນ ເປັນຕົ້ນຄື:

1. ເນື້ອທີ່ການຜະລິດຂອງກຸ່ມຍັງຄືເກົ່າ 15 ເຮັກຕາ ແລະ ນຳໃຊ້ຫຼັກການກະສິກຳທີ່ດີໃນການປູກຜັກກະລ່ຳ.

2. ຍັບລະດູການປູກ: ທາງກຸ່ມໄດ້ທົດລອງເລື່ອນລະດູການປູກ ເພື່ອຫຼີກລ້ຽງການສະໜອງເກີນໃນຊ່ວງລະດູເກັບກ່ຽວ. ແຕ່ຜົນຜະລິດກໍ່ບໍ່ໄດ້ດີຍ້ອນສະພາບອາກາດທີ່ບໍ່ເອື້ອອຳນວຍ. ຕົວຢ່າງ: ປົກກະຕິຊາວສວນ ຈະປູກຜັກກະລ່ຳໃນເດືອນພະຈິກ-ເດືອນທັນວາ ແລະ ເກັບກ່ຽວໃນເດືອນກຸມພາ ຫາ ເດືອນມີນາ, ຈາກນັ້ນ, ເຂົາເຈົ້າຈຶ່ງປ່ຽນໄປປູກໃນເດືອນມັງກອນ-ກຸມພາ ເພື່ອໃຫ້ສາມາດເກັບກ່ຽວໄດ້ໃນເດືອນເມສາ-ພຶດສະພາ. ແຕ່ຜົນຜະລິດບໍ່ໄດ້ດີ ຍ້ອນຝົນຕົກ ແລະ ຟ້າແດດອາກາດຮ້ອນໃນໄລຍະເກັບກ່ຽວໃນເດືອນເມສາ.

3. ປູກຜັກໃນເຮືອນຮົ່ມ: ການທົດລອງປູກໃນເຮືອນຮົ່ມ ບໍ່ປະສົບຜົນສຳເລັດ ເນື່ອງຈາກອຸນຫະພູມສູງ ເມື່ອຜັກກະລ່ຳເລີ່ມຫໍ່ ອາກາດໃນເຮືອນຮົ່ມເອົ້າ ເຮັດໃຫ້ຜັກກະລ່ຳເນົ່າ.

ໃນການແກ້ໄຂ ຜັກທີ່ເນົ່າເສຍຫາຍ ແລະ ເຫຼືອຂາຍ ແມ່ນຊາວສວນກໍ່ໄດ້ນຳໄປເປັນອາຫານເກືອເປັດ, ໄກ່, ປາ ຫຼື ປະຖິ້ມໄວ້ໃນທົ່ງນາ ເພື່ອເປັນຝຸ່ນໃຫ້ແກ່ດິນ. ທາງກຸ່ມກໍ່ຄິດຢາກຂາຍກະລ່ຳປີໃຫ້ຟາມໄກ່ ເພື່ອນຳໄປເກືອໄກ່ ແຕ່ທີ່ຕັ້ງຂອງສວນແມ່ນຢູ່ໄກຈາກຜູ້ຊື້ ແລະ ລາຄາອາດຈະບໍ່ຄຸ້ມຄ່າຄ່າຂົນສົ່ງ.

ສະນັ້ນ, ຊາວກະສິກອນກຸ່ມປູກຜັກກະລ່ຳບ້ານຜາຮອມ ກໍ່ຢາກຂໍໃຫ້ຊ່ວຍໃນການຊອກຕະຫຼາດເພີ່ມໃຫ້ຊາວສວນດ້ວຍ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;